WASTE to VALUE

Creating sustainable and inclusive growth

# IMPACT STORY

## A Journey to Transforming Community Environments




*Image: Ms. Manith, Credit: Swisscontact*

### Finding Community and a Shared Purpose

Previously, Tou, an entrepreneurial woman with a mobility disability living in Hongsouphap Village, managed her livelihood entirely on her own. Faced with limited access to formal employment, she turned into an informal waste worker because she recognized the economic value of recyclable materials. She began collecting plastic bottles and aluminum cans for daily income, while also repurposing scrap cloth to create marketable products like handmade foot mats. While she was deeply dedicated to earning an independent living, operating solo was physically demanding and came with natural limitations in business growth, especially without proper equipment or technical knowledge. At the time, her solo efforts brought in less than 300,000 LAK per week, making it difficult to achieve financial stability.

A major turning point came when local village authorities connected her with opportunities to join a vocational training and community disability group. Transitioning from working alone to a collaborative group dynamic completely transformed her approach. It not only stabilized her income but also taught her to view her efforts through a business lens. Today, working alongside others has given Tou significantly more bargaining power in the market, proper support, and renewed confidence in building her future.

### Joining the Waste to Value (W2V) Project

Encouraged by friends, Tou decided to participate in a Workplace Safety Training conducted by the Waste to Value (W2V) project, hoping to gain practical skills and improve her livelihood in 2023. Through the project, she received training in occupational safety, waste sorting techniques, basic first aid, and financial management, providing her far beyond what she had expected. She also learned how different types of recyclable materials could be separated and sold for better prices, helping her increase her income more effectively.



*Image: Ms. Manith and the members of the community disability group, Credit: Swisscontact*

*"Before, I never knew how to manage accounts or save money for health emergencies. The basic entrepreneurship training taught us about saving and, most importantly, how to sort different types of waste before selling to get a better price,"* Tou explains.

### A Meaningful and Sustainable New Life

As part of the project's support for inclusive livelihoods, Tou received a specially designed waste collection cart and protective safety equipment. The support not only improved her ability to work more safely and efficiently but also demonstrated to others in the community that people with disabilities can actively contribute to environmental improvement and economic development when given equal opportunities.

She can now collect a much larger volume of waste and travel further with a renewed sense of safety. The most tangible success is that her weekly income has doubled, rising to **600,000 LAK.** This increased income has become a pillar for her family, allowing her to support her children's education and contribute to the utility bills of her community group. Beyond collecting recyclables, she has applied her new skills to upcycle scrap cloth into floor mats, which she also sells through online channels like Facebook to generate supplemental income.

### Inspiration for the Future

Today, Tou and her team of workers with disabilities have become models of solidarity and perseverance. They are not only earning an independent living but are also actively participating in reducing urban waste. Looking ahead, Tou is determined to strengthen her association's activities to help other people with disabilities find meaningful careers and dignity in society.

> ***"No matter what obstacles someone is facing, I want everyone to believe that we can do it. Do not be discouraged; keep your spirits high and fight for the goals you have set,"***
> *- Tou shares as a message to everyone.*

*Image: Ms. Manith as a guest speaker at the ASEAN Conference on Combatting Plastic Pollution 2024, Credit: Swisscontact*



**Waste to Value Project**

Main objectives: to improve the environmental performance of service sector SMEs through access to green products and better waste management practices; and to enhance the business operations of informal waste pickers to improve their livelihood.

| | |
|---|---|
| Project duration: | February 2022 – December 2024 |
| Project location: | Xaysetha and Chanthabouly in Vientiane Capital, Vang Vieng in Vientiane Province |
| Project partners: | Ministry of Natural Resources and Environment, Hotel and Restaurant Associations, Green suppliers and service providers, National University of Laos, Local district authorities. |
| Target Groups: | Service sector SMEs and informal waste pickers |



*This project is part of the Swisscontact Development Programme, which is co-financed by the Swiss Agency for Development and Cooperation (SDC), Federal Department of Foreign Affairs FDFA and other donors.*

# IMPACT STORY

## ການເດີນທາງສູ່ການປ່ຽນແປງດ້ານສິ່ງແວດລ້ອມໃນຊຸມຊົນ




*ຮູບພາບ: ນາງ ມານິດ ພິລາວັນ,     ເຄດິດ: ສະວິດຄອນແທັກ*

### ການຮ່ວມກຸ່ມ ເພື່ອເປົ້າໝາຍດຽວກັນ

ໃນເມື່ອກ່ອນ, ເອື້ອຍຕູ່, ເຊິ່ງເປັນແມ່ຍິງທີ່ມີຄວາມພິການທາງໃນການຍ່າງ ແຕ່ມີຫົວຄິດທາງດ້ານທຸລະກິດ ທີ່ອາໄສຢູ່ ບ້ານຮ່ອງສຸພາບ, ໄດ້ປະກອບອາຊີບລ້ຽງຊີບດ້ວຍຕົວລາວເອງມາໂດຍຕະຫຼອດ. ເນື່ອງຈາກໂອກາດໃນການເຂົ້າເຖິງວຽກເຮັດງານທຳທີ່ເໝາະສົມຈຳກັດ, ລາວຈຶ່ງໄດ້ຫັນມາເຮັດອາຊີບເກັບ ແລະ ຄັດແຍກສິ່ງເສດເຫຼືອ ເພາະເລັງເຫັນເຖິງຄຸນຄ່າທາງເສດຖະກິດຂອງສິ່ງເສດເຫຼືອທີ່ສາມາດນຳມາຣີໄຊເຄີນໄດ້. ລາວໄດ້ເລີ່ມເກັບກະຕຸກຢາງ ແລະ ກະປ໋ອງອາລູມິນຽມເພື່ອສ້າງລາຍຮັບປະຈຳວັນ, ໄປພ້ອມໆກັບການນຳເອົາເສດຜ້າມາປະຍຸກ ເພື່ອຜະລິດເປັນສິນຄ້າທີ່ສາມາດຂາຍໄດ້ໃນທ້ອງຕະຫຼາດໄດ້ ເຊັ່ນ: ຜ້າເຊັດຕີນເຮັດດ້ວຍມື ແລະ ຈັກຫຍິບ. ເຖິງວ່າລາວຈະມີຄວາມມຸ່ງໝັ້ນສູງໃນການເພິ່ງພາຕົນເອງ, ແຕ່ການເຮັດວຽກແບບລຳພັງຄົນດຽວແມ່ນມີຄວາມຍາກລຳບາກ ແລະ ມີຂໍ້ຈຳກັດທາງດ້ານລາຍຮັບ ຍ້ອນຂາດທັງອຸປະກອນ ແລະ ເຕັກນິກຄວາມຮູ້. ໃນຊ່ວງເວລານັ້ນ, ລາວມີລາຍຮັບບໍ່ເຖິງ 300,000 ກີບຕໍ່ອາທິດ, ເຊິ່ງຖືວ່າມີຄວາມຫຍຸ້ງຍາກໃນການສ້າງຄວາມໝັ້ນຄົງໃຫ້ແກ່ຄອບຄົວ.

ຈຸດປ່ຽນທີ່ສຳຄັນແມ່ນຕອນທີ່ອຳນາດການປົກຄອງບ້ານໄດ້ຊ່ວຍແນະນຳ ແລະ ຍື່ນໂອກາດໃຫ້ລາວໄດ້ເຂົ້າຮ່ວມເຝິກອົບຮົມວິຊາຊີບ ແລະ ຮ່ວມກຸ່ມຄົນພິການໃນຊຸມຊົນຂອງລາວ. ການຫັນປ່ຽນຈາກການເຮັດວຽກຄົນດຽວ ມາເປັນການຮ່ວມກຸ່ມເຮັດວຽກຮ່ວມກັນ ໄດ້ປ່ຽນແປງວິທີການເຮັດວຽກຂອງລາວໄດ້ດີຂຶ້ນ, ມັນບໍ່ພຽງແຕ່ຊ່ວຍໃຫ້ລາຍໄດ້ມີຄວາມໝັ້ນຄົງຂຶ້ນເທົ່ານັ້ນ, ແຕ່ຍັງຊ່ວຍປ່ຽນແນວຄິດຈາກການເຮັດວຽກຄົນດຽວແບບລາຍວັນ ໃຫ້ກາຍເປັນການເຮັດເປັນກຸ່ມຢ່າງມີລະບົບ. ໃນປັດຈຸບັນ, ການເຮັດວຽກຮ່ວມກັນກັບສະມາຊິກຄົນອື່ນໆ ໄດ້ຊ່ວຍເພີ່ມຄວາມສາມາດການຕໍ່ລອງດ້ານລາຄາໃນທ້ອງຕະຫຼາດທີ່ຮັບຊື້ສິ່ງເສດເຫຼືອ, ເຊິ່ງເຮັດໃຫ້ເອື້ອຍຕູ່ມີຄວາມໝັ້ນໃຈຫຼາຍຂຶ້ນໃນການສ້າງອະນາຄົດຂອງຕົນເອງ.

### ການກ້າວເຂົ້າສູ່ໂຄງການ Waste to Value (W2V)

ໃນປີ 2023, ເອື້ອຍຕູ່ໄດ້ຕັດສິນໃຈເຂົ້າຮ່ວມເຝິກອົບຮົມກ່ຽວກັບຄວາມປອດໄພໃນສະຖານທີ່ເຮັດວຽກ ທີ່ຈັດຕັ້ງໂດຍໂຄງການ Waste to Value (W2V) ໂດຍຜ່ານການຊັກຊວນຂອງໝູ່ເພື່ອນ. ເບື້ອງຕົ້ນ, ລາວພຽງແຕ່ຫວັງຈະໄດ້ຄວາມຮູ້ເພີ່ມເຕີມ, ແຕ່ສິ່ງທີ່ລາວໄດ້ຮັບນັ້ນມີຄຸນຄ່າຫຼາຍກວ່າທີ່ຄາດໄວ້. ໂຄງການໄດ້ໃຫ້ການສະໜັບສະໜູນຢ່າງຮອບດ້ານ ບໍ່ວ່າຈະເປັນການເຝິກອົບຮົມດ້ານຄວາມປອດໄພໃນສະຖານເຮັດວຽກ, ການປະຖົມພະຍາບານເບື້ອງຕົ້ນ, ແລະ ທັກສະການບໍລິຫານການເງິນ.



*ຮູບພາບ: ນາງ ມານິດ ກັບສະມາຊິກກຸ່ມຄົນພິການໃນຊຸມຊົນ,*
*ເຄດິດ: ສະວິດຄອນແທັກ*

*ເມື່ອກ່ອນ ຂ້ອຍບໍ່ເຄີຍຮູ້ເລື່ອງການເຮັດບັນຊີ ຫຼື ການທ້ອນເງິນໄວ້ໃຊ້ຍາມເຈັບເປັນເລີຍ. ໂຄງການສອນໃຫ້ຮູ້ຈັກການເກັບອອມແລະ ທີ່ສຳຄັນທີ່ສຸດຄື ການຄັດແຍກຂີ້ເຫຍື້ອແຕ່ລະປະເພດກ່ອນຂາຍ ເພື່ອໃຫ້ໄດ້ລາຄາທີ່ດີຂຶ້ນ"* ເອື້ອຍຕູ່ກ່າວ.

## ຊີວິດໃໝ່ທີ່ມີຄວາມໝາຍ ແລະ ຍືນຍົງ

ຫຼັງຈາກໄດ້ຮັບການສະໜັບສະໜູນ ລົດຊາເລັ້ງ (Cart) ທີ່ອອກແບບມາເປັນພິເສດ ແລະ ອຸປະກອນປ້ອງກັນຄວາມປອດໄພຈາກໂຄງການ, ປະສິດທິພາບໃນການເຮັດວຽກຂອງເອື້ອຍຕູ່ກໍ່ເພີ່ມຂຶ້ນຢ່າງເຫັນໄດ້ຊັດເຈນ. ລາວສາມາດເກັບສິ່ງເສດເຫຼືອໄດ້ໃນປະລິມານທີ່ຫຼາຍຂຶ້ນ ແລະ ສາມາດເດີນທາງໄປໄດ້ໄກກວ່າເກົ່າດ້ວຍຄວາມຮູ້ສຶກທີ່ປອດໄພ.

ຜົນສຳເລັດທີ່ເຫັນໄດ້ຢ່າງເປັນຮູບປະທຳຄື ລາຍໄດ້ຂອງລາວເພີ່ມຂຶ້ນສອງເທົ່າ ເປັນ 600,000 ກີບຕໍ່ອາທິດ. ລາຍໄດ້ທີ່ເພີ່ມຂຶ້ນນີ້ໄດ້ກາຍເປັນເສົາຄ້ຳໃຫ້ແກ່ຄອບຄົວ, ຊ່ວຍໃຫ້ລາວສາມາດສົ່ງລູກຮຽນັງສື ແລະ ຍັງມີສ່ວນຮ່ວມໃນການຈ່າຍຄ່ານ້ຳ-ຄ່າໄຟ ໃຫ້ແກ່ກຸ່ມຄົນພິການອີກດ້ວຍ.

ນອກຈາກການເກັບຂີ້ເຫຍື້ອແລ້ວ, ລາວຍັງໄດ້ນຳເອົາຄວາມຮູ້ມາຕໍ່ຍອດ ໂດຍການນຳຜ້າເສດມາແປຮູບເປັນຜ້າເຊັດຕີນ ແລະ ຂາຍຜ່ານຊ່ອງທາງອອນລາຍ ເພື່ອສ້າງລາຍຮັບເສີມ.

## ແຮງບັນດານໃຈສູ່ອະນາຄົດ

ມື້ນີ້, ເອື້ອຍຕູ່ ແລະ ທີມງານກຸ່ມຄົນພິການ ໄດ້ກາຍເປັນແບບຢ່າງຂອງຄວາມສາມັກຄີ ແລະ ຄວາມພະຍາຍາມ. ພວກເຂົາບໍ່ພຽງຫາລ້ຽງຊີບດ້ວຍຕົນເອງເທົ່ານັ້ນ, ແຕ່ຍັງມີສ່ວນຮ່ວມຢ່າງຕັ້ງໜ້າໃນການຫຼຸດຜ່ອນຂີ້ເຫຍື້ອໃນຕົວເມືອງ. ໃນອະນາຄົດ, ເອື້ອຍຕູ່ມີຄວາມມຸ່ງໝັ້ນທີ່ຈະຂະຫຍາຍກິດຈະກຳຂອງສະມາຄົມໃຫ້ເຂັ້ມແຂງຂຶ້ນ ເພື່ອຊ່ວຍເຫຼືອຄົນພິການຄົນອື່ນໆ ໃຫ້ມີອາຊີບ ແລະ ມີກຽດສັກສີໃນສັງຄົມ.

***"ບໍ່ວ່າໃຜທີ່ກຳລັງປະເຊີນກັບອຸປະສັກ, ຂ້ອຍຢາກໃຫ້ທຸກຄົນເຊື່ອໝັ້ນວ່າເຮົາເຮັດໄດ້. ຢ່າທໍ້ແທ້, ຂໍໃຫ້ມີກຳລັງໃຈ ແລະ ສູ້ເພື່ອເປົ້າໝາຍທີ່ເຮົາຕັ້ງໄວ້".*** *ນີ້ຄືຂໍ້ຄວາມທີ່ເອື້ອຍຕູ່ຝາກເຖິງທຸກຄົນ.*

*ຮູບພາບ: ນາງ ມານິດ ໜຶ່ງໃນແຂກຮັບເຊີນຂຶ້ນເສວະນາ ໃນກອງປະຊຸມ (ASEAN Conference on Combatting Plastic Pollution 2024), ເຄດິດ: ສະວິດຄອນແທັກ*



**ໂຄງການ ສ້າງມູນຄ່າແກ່ສິ່ງເສດເຫຼືອ**

ຈຸດປະສົງຫຼັກ: ເພື່ອປັບປຸງສະພາບແວດລ້ອມການດຳເນີນງານຂອງຫົວໜ່ວຍທຸລະກິດຂະແໜງການບໍລິການ ເພື່ອໃຫ້ເຂົ້າເຖິງຜະລິດຕະພັນສີຂຽວ ແລະ ການປະຕິບັດເພື່ອຈັດການສິ່ງເສດເຫຼືອທີ່ດີກວ່າເກົ່າ; ແລະ ຍົກລະດັບການດຳເນີນທຸລະກິດຂອງຜູ້ເກັບຂີ້ເຫຍື້ອທີ່ບໍ່ເປັນທາງການ ເພື່ອປັບປຸງຄຸນນະພາບຊີວິດຂອງພວກເຂົາໃຫ້ດີຂຶ້ນ.



ໄລຍະເວລາຂອງໂຄງການ : ກຸມພາ 2022 - ທັນວາ 2024
ພື້ນທີ່ໂຄງການ: ເມືອງ ໄຊເສດຖາ ແລະ ຈັນທະບູລີ, ນະຄອນຫຼວງວຽງຈັນ ແລະ ເມືອງ ວັງວຽງ, ແຂວງວຽງຈັນ.
ຄູ່ຮ່ວມງານ: ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະມາຄົມຮ້ານໂຮງແຮມ ແລະ ຮ້ານອາຫານ, ຜູ້ສະໜອງ ແລະ ຜູ້ໃຫ້ບໍລິການ ກ່ຽວກັບຜະລິດຕະພັນສີຂຽວ, ມະຫາວິທະຍາໄລແຫ່ງຊາດລາວ, ອຳນາດການປົກຄອງທ້ອງຖິ່ນຂັ້ນເມືອງ.
ກຸ່ມເປົ້າໝາຍ: ຫົວໜ່ວຍທຸລະກິດ ຂະແໜງການບໍລິການ ແລະ ຜູ້ເກັບຂີ້ເຫຍື້ອທີ່ບໍ່ເປັນທາງການ

*"ໂຄງການນີ້ແມ່ນສ່ວນໜຶ່ງຂອງໂຄງການພັດທະນາຂອງ ອົງການສະວິດຄອນແທັກ, ເຊິ່ງໄດ້ຮັບທຶນສົມທົບໂດຍ ອົງການເພື່ອການພັດທະນາ ແລະ ການຮ່ວມມື ປະເທດສະວິດເຊີແລນ (SDC), ກົມການຕ່າງປະເທດຂອງລັດຖະບານກາງ (FDFA) ແລະ ຜູ້ໃຫ້ທຶນອື່ນໆ."*